**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0682 /ອຄ.ກອຫ
ນະຄອນຫຼວງວຽງຈັນ, ວັນທີ 17 JUL 2020

# ຄຳແນະນຳ
## ກ່ຽວກັບການດຳເນີນກິດຈະການໂຮງງານປຸງແຕ່ງ ສິ່ງເສດເຫຼືອຢາງປລາສະຕິກ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ສະບັບເລກທີ 0264/ອຄ.ກອຫ, ລົງວັນທີ 15 ມີນາ 2019.
- ອີງຕາມໜັງສືສະເໜີຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 0463/ກອຫ.ຄຮ, ລົງວັນທີ 25 ມີນາ 2020.

ເພື່ອຮັບປະກັນໃຫ້ການຄຸ້ມຄອງ ການດຳເນີນກິດຈະການໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ໃຫ້ໄດ້ຕາມເງື່ອນໄຂ ແລະ ມາດຕະຖານເຕັກນິກໂຮງງານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ແນໃສ່ຫຼຸດຜ່ອນຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານຢູ່ໃນໂຮງງານ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ, ປະກອບສ່ວນແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ:**

### 1. ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ

ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ແມ່ນໂຮງງານ ດັ່ງນີ້:

1.1 ເປັນປະເພດໂຮງງານອຸດສາຫະກຳປຸງແຕ່ງໜຶ່ງ ໃນຊາວສີ່ປະເພດໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013, ລະຫັດສາລະບານການຈັດແບ່ງຂະແໜງເສດຖະກິດ ຂອງ ສປປ ລາວ (LSIC) ຄື: ລະຫັດໝູ່ 2221 ການຜະລິດເຄື່ອງໃຊ້ປລາສະຕິກ ແລະ ລະຫັດໝູ່ 3830 ຫຼື ໝູ່ຍ່ອຍ 38302 ການນຳເສດວັດສະດຸມາໃຊ້ຄືນ.

1.2 ເປັນໂຮງງານທີ່ນຳເອົາວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ເຂົ້າຜ່ານຂະບວນການປຸງແຕ່ງ ປ່ຽນຈາກສະພາບເດີມໃຫ້ກາຍເປັນຜະລິດຕະພັນຢາງປລາສະຕິກເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ ດ້ວຍການນຳໃຊ້ເຄື່ອງຈັກ ແລະ ແຮງງານຄົນຢູ່ໃນໂຮງງານ, ຊຶ່ງຜະລິດຕະພັນເຫຼົ່ານັ້ນສາມາດເອົາໄປຈຳໜ່າຍເປັນສິນຄ້າໄດ້.

### 2. ເງື່ອນໄຂການດຳເນີນກິດຈະການ ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ

ການດຳເນີນກິດຈະການໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຕ້ອງມີເງື່ອນໄຂ ດັ່ງນີ້:

2.1 ມີໃບອະນຸຍາດ: 1) ໃບທະບຽນວິສາຫະກິດ; 2) ໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດຳເນີນທຸລະກິດ; 3) ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມໂຮງງານ; 4) ໃບອະນຸຍາດປຸກສ້າງ; 5) ໃບຢັ້ງຢືນດຳເນີນກິດຈະການໂຮງງານ.

2.2 ມີມາດຕະຖານທາງດ້ານເຕັກນິກຄົບຖ້ວນແຕ່ລະດ້ານ ຕາມທີ່ກຳນົດໄວ້ໃນ ຂໍ້ 3 ຂອງຄຳແນະນຳສະບັບນີ້.

2.3 ມີວິຊາການເຕັກນິກສະເພາະດ້ານ ເປັນຕົ້ນ ດ້ານເຄມີ ຫຼື ສິ່ງແວດລ້ອມ ຢ່າງໜ້ອຍ 1 ຄົນ ຂຶ້ນໄປ.

2.4 ມີບົດວິພາກເສດຖະກິດ-ເຕັກນິກໂຮງງານ ແລະ ມີທຶນສົມທົບໃນການຄຸ້ມຄອງໂຮງງານ ເພື່ອການຕິດຕາມ ກວດກາດ້ານມາດຕະຖານເຕັກນິກ ແລະ ສິ່ງແວດລ້ອມໂຮງງານ (ກົມອຸດສາຫະກຳ ແລະ ຫັດຖະກຳ ຈະມີເອກະສານ ແນະນຳຕ່າງຫາກ ກ່ຽວກັບທຶນສົມທົບ).

**3. ມາດຕະຖານຂອງໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ**

ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ໃຫ້ມີມາດຕະຖານທາງດ້ານເຕັກນິກແຕ່ລະດ້ານ ຄືດັ່ງນີ້:

3.1 ສະຖານທີ່ຕັ້ງໂຮງງານ;

3.2 ສິ່ງປຸກສ້າງໃນໂຮງງານ;

3.3 ອາຄານຜະລິດຂອງໂຮງງານ;

3.4 ເຄື່ອງຈັກນຳໃຊ້ໃນໂຮງງານ;

3.5 ຂະບວນການຜະລິດໃນໂຮງງານ;

3.6 ການເກັບຮັກສາວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ;

3.7 ການບຳບັດ ແລະ ການກຳຈັດສິ່ງເສດເຫຼືອ;

3.8 ຄວາມປອດໄພໂຮງງານ;

3.9 ສຸຂານາໄມໂຮງງານ;

3.10 ການບໍລິຫານໂຮງງານ.

**4. ມາດຕະຖານທາງດ້ານເຕັກນິກ ຂອງໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ໃນແຕ່ລະດ້ານ**

**4.1 ມາດຕະຖານຂອງສະຖານທີ່ຕັ້ງໂຮງງານ**

ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ໃຫ້ຕັ້ງຢູ່ສະຖານທີ່ ດັ່ງນີ້:

1) ໂຮງງານທີ່ສ້າງຕັ້ງໃໝ່ ໃຫ້ຕັ້ງຢູ່ໃນເຂດອຸດສາຫະກຳ ຫຼື ນິຄົມອຸດສາຫະກຳ ທີ່ສາມາດຮອງຮັບການດຳເນີນ ກິດຈະການໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ເທົ່ານັ້ນ;

2) ໂຮງງານທີ່ສ້າງຕັ້ງກ່ອນຄຳແນະນຳສະບັບນີ້ ທີ່ບໍ່ໄດ້ສ້າງຕັ້ງຢູ່ໃນເຂດອຸດສາຫະກຳ ຫຼື ນິຄົມອຸດສາຫະກຳ ຕາມຂໍ້ (1) ເທິງນີ້ ໃຫ້ຕັ້ງຢູ່ຫ່າງຈາກເຂດຊຸມຊົນໜາແໜ້ນ, ເຂດຫວງຫ້າມທາງການ ຢ່າງໜ້ອຍ 100 ແມັດຂຶ້ນໄປ ແລະ ຫ່າງຈາກແຫຼ່ງນ້ຳທຳມະຊາດ ຢ່າງໜ້ອຍ 250 ແມັດຂຶ້ນໄປ.

**4.2 ມາດຕະຖານຂອງສິ່ງປຸກສ້າງໃນໂຮງງານ**

ສິ່ງປຸກສ້າງໂຮງງານ ໃຫ້ປະກອບມີມາດຕະຖານຕົ້ນຕໍ ດັ່ງນີ້:

1) ພາຍໃນຂອບເຂດຂອງໂຮງງານ ໃຫ້ມີສິ່ງປຸກສ້າງທີ່ຈຳເປັນ ເປັນຕົ້ນ ຫ້ອງການບໍລິຫານ, ອາຄານຜະລິດ, ສາງເກັບມ້ຽນວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ, ສາງຜະລິດຕະພັນ, ລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອ;

2) ມີເສັ້ນທາງເຂົ້າ-ອອກ ສະດວກ, ບໍ່ກີດຂວາງການສັນຈອນ, ຮັບປະກັນບໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3) ໃຫ້ມີກຳແພງ ຫຼື ຮົ້ວອ້ອມ ທີ່ແໜ້ນໜາແຂງແຮງ ອ້ອມຮອບຂອບເຂດໂຮງງານ, ມີປະຕູທາງເຂົ້າ-ອອກ ກວ້າງຂວາງດີ ແລະ ໃຫ້ຕິດປ້າຍຊື່ໂຮງງານ ໃຫ້ຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ;

4) ອາຄານຜະລິດ, ສາງເກັບມ້ຽນວັດຖຸດິບສິ່ງເສດເຫຼືອ, ລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອໂຮງງານ ໃຫ້ຕັ້ງຢູ່ຫ່າງໄກຈາກຂອບຮົ້ວຂອງໂຮງງານ ຢ່າງໜ້ອຍ 10 ແມັດຂຶ້ນໄປ.

**4.3 ມາດຕະຖານຂອງອາຄານຜະລິດຂອງໂຮງງານ**

ອາຄານຜະລິດຂອງໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຕ້ອງໃຫ້ໄດ້ຕາມມາດຕະຖານຕົ້ນຕໍ ດັ່ງນີ້:

1) ໂຄງສ້າງແໜ້ນໜາແຂງແຮງ, ທົນທານຕໍ່ແຮງກະທົບຕ່າງໆ ແລະ ເໝາະສົມກັບການດຳເນີນກິດຈະການ; ແຜນຜັງການຕິດຕັ້ງເຄື່ອງຈັກ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ. ໃນນັ້ນ, ອາຄານໂຮງງານຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກການກໍ່ສ້າງ ຈາກຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ;

2) ເສົາເຮັດດ້ວຍເບຕົງ, ເຫຼັກ ຫຼື ໄມ້ ທີ່ແຂງແຮງ ແລະ ທົນທານ;

3) ຫຼັງຄາມຸງດ້ວຍກະເບື້ອງ ຫຼື ສັງກະສີ, ຄວາມສູງຈາກພື້ນຫາເພດານ ບໍ່ຕ່ຳກວ່າ 4 ແມັດ;

4) ພື້ນອາຄານໃຫ້ເຮັດດ້ວຍເບຕົງ ແລະ ບໍ່ມີຮອຍແຕກແຫງ, ບໍ່ມີນ້ຳຂັງ ຫຼື ມື່ນ, ໃຫ້ຈັດສັນພື້ນທີ່ອາຄານ ໃຫ້ເປັນລະບົບ, ມີຄວາມສະອາດ ແລະ ເປັນລະບຽບຮຽບຮ້ອຍ ໂດຍຂີດໝາຍເສັ້ນແບ່ງພື້ນທີ່ພາຍໃນໂຮງງານ, ອ້ອມຮອບອາຄານໃຫ້ມີຮ່ອງລະບາຍນ້ຳ ເພື່ອລະບາຍນ້ຳລົງສູ່ອ່າງບຳບັດນ້ຳເສຍ;

5) ຝາກໍ່ດ້ວຍດິນຈີ່ ຫຼື ດິນບ໊ອກ ແລະ ໂບກດ້ວຍຊີມັງ ຫຼື ຝາເຮັດດ້ວຍແຜ່ນອາລູຊີງ;

6) ມີປະຕູເຂົ້າ-ອອກທົ່ວໄປ ແລະ ປະຕູທາງອອກສຸກເສີນ ຢ່າງໜ້ອຍໜຶ່ງບ່ອນຂຶ້ນໄປ. ບານປະຕູທາງອອກສຸກເສີນ ໃຫ້ເປັນຊະນິດຍູ້ເປີດອອກໄດ້ງ່າຍ ແລະ ບໍ່ມີສິ່ງກີດຂວາງໃນເວລານຳໃຊ້ ພ້ອມທັງຕິດປ້າຍບອກເຕືອນ ແລະ ເຫັນໄດ້ງ່າຍ. ອາຄານໂຮງງານທີ່ມີສອງຊັ້ນຂຶ້ນໄປ ໃຫ້ມີຂັ້ນໄດຂຶ້ນ-ລົງ ແລະ ຕ້ອງມີຂັ້ນໄດສຸກເສີນລະຫວ່າງຊັ້ນ ຢ່າງໜ້ອຍໜຶ່ງບ່ອນ ແລະ ສາມາດນຳໃຊ້ໄດ້;

7) ເນື້ອທີ່ບ່ອນເຮັດການຜະລິດໃຫ້ເໝາະສົມກັບຈຳນວນຜູ້ອອກແຮງງານ ໂດຍອັດຕາສ່ວນຢ່າງໜ້ອຍ 3 ແມັດມົນທົນ ຕໍ່ກຳມະກອນໜຶ່ງຄົນ;

8) ໃຫ້ຕິດຕັ້ງຫຼອດໄຟຟ້າ ຫຼື ດອກໄຟຟ້າ ເພື່ອໃຫ້ມີແສງສະຫວ່າງພຽງພໍ ແລະ ເໝາະສົມກັບແຕ່ລະຂອດງານ;

9) ໃຫ້ຕິດຕັ້ງພັດລົມ, ລະບົບລະບາຍອາກາດ ແລະ ອື່ນໆ ໂດຍໃຫ້ສົມສ່ວນກັບເນື້ອທີ່ເຮັດວຽກ ແລະ ຈຳນວນຜູ້ອອກແຮງງານ. ບ່ອນເຮັດວຽກ, ຂອດງານທີ່ມີກິ່ນຂີວ ແລະ ມີຄວາມຮ້ອນສູງ ໃຫ້ຕິດຕັ້ງເຄື່ອງດູດອາກາດເຂົ້າຜ່ານລະ ບົບບຳບັດກິ່ນຂີວ ແລະ ຄວາມຮ້ອນດັ່ງກ່າວ.

### 4.4 ມາດຕະຖານຂອງເຄື່ອງຈັກນຳໃຊ້ໃນໂຮງງານ

ເຄື່ອງຈັກຢູ່ໃນໂຮງງານ ຕ້ອງໃຫ້ໄດ້ຕາມມາດຕະຖານຕົ້ນຕໍ ດັ່ງນີ້:

1) ເຄື່ອງຈັກຕ້ອງເປັນເຄື່ອງຈັກທີ່ທັນສະໄໝ ແລະ ສາມາດນຳໃຊ້ໄດ້ຢ່າງມີປະສິດທິຜົນ, ຮັບປະກັນໃຫ້ຜະລິດຕະພັນມີຄຸນນະພາບ ແລະ ໄດ້ມາດຕະຖານ. ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ໃຫ້ຕິດຕັ້ງລະບົບເຄື່ອງຈັກຕົ້ນ ຕໍ ເຊັ່ນ: ເຄື່ອງຈັກລ້າງ, ເຄື່ອງຈັກແຍກ, ເຄື່ອງຈັກບົດຢາງ, ເຄື່ອງຈັກຫຼອມຢາງ, ເຄື່ອງຈັກຕັດຢາງ, ເຄື່ອງຈັກບຳບັດກິ່ນ, ຄວັນ, ເຄື່ອງຈັກບຳບັດສິ່ງເສດເຫຼືອ ແລະ ເຄື່ອງຈັກຜະລິດຜະລິດຕະພັນຢາງປລາສະຕິກສຳເລັດຮູບ (ຖ້າຜະລິດເປັນຜະລິດຕະພັນຢາງປລາສະຕິກສຳເລັດຮູບ);

2) ການຕິດຕັ້ງເຄື່ອງຈັກຕ້ອງໃຫ້ຖືກຕາມມາດຕະຖານເຕັກນິກ, ຖືກຕ້ອງຕາມແຜນຜັງ ຫຼື ຄູ່ມືແນະນຳການຕິດຕັ້ງເຄື່ອງຈັກ, ເປັນລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ ແລະ ຮັບປະກັນຄວາມປອດໄພໃນເວລານຳໃຊ້;

3) ກົນໄກການສົ່ງຄ່ຽນຂອງເຄື່ອງຈັກ ບ່ອນທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ ເປັນຕົ້ນ ກົງລໍ້ໝູນ, ແຂ້ວເຟືອງ, ສາຍພານ, ສາຍໂສ້ ຕ້ອງມີຝາຄອບ, ຕາໜ່າງເຫຼັກປ້ອງກັນ ຫຼື ສິ່ງກັ້ນບັງ ຕາມຄວາມຈຳເປັນ ແລະ ເໝາະສົມ;

4) ໃຫ້ຂຶ້ນບັນຊີເຄື່ອງຈັກ ໂດຍລະບຸຈຳນວນ, ກຳລັງແຮງມ້າ, ພະລັງງານທີ່ນຳໃຊ້, ຍີ່ຫໍ້, ປະເທດຜະລິດ, ປີຜະລິດ ແລະ ໃຫ້ມີຄູ່ມືການນຳໃຊ້;

5) ມີແຜນການຕິດຕາມກວດກາ, ບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກ ໃຫ້ຢູ່ໃນສະພາບດີ ແລະ ນຳໃຊ້ໄດ້ຢ່າງເປັນປົກກະຕິ.

### 4.5 ມາດຕະຖານຂອງຂະບວນການຜະລິດ

ຂະບວນການຜະລິດຂອງໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຕ້ອງເປັນລະບົບຕ່ອງໂສ້ທີ່ເໝາະສົມເລີ່ມແຕ່ຂອດນຳວັດຖຸດິບເຂົ້າຜະລິດ ຈົນຮອດຂອດຜະລິດຕະພັນສຸດທ້າຍ ຄືດັ່ງນີ້:

1) ຂະບວນການແຍກວັດຖຸດິບ;

2) ຂະບວນການລ້າງ;

3) ຂະບວນການປົດ;

4) ຂະບວນການຫຼອມ;

5) ຂະບວນການຕັດເປັນເມັດ;

6) ຂະບວນການບັນຈຸ ແລະ ຫຸ້ມຫໍ່ ເມັດຢາງປລາສະຕິກ;

7) ຂະບວນການຜະລິດ ຜະລິດຕະພັນຢາງປລາສະຕິກສໍາເລັດຮູບ (ຖ້າມີ).

ພາຍໃນອາຄານໂຮງງານ ຫຼື ບ່ອນເຮັດວຽກ ຕ້ອງບໍ່ມີສິ່ງກີດຂວາງທາງຍ່າງ, ໃຫ້ຕິດປ້າຍຊີ້ບອກຂະບວນການຜະລິດເປັນພາສາລາວຢູ່ແຕ່ລະຂອດງານ ແລະ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍດີ.

**4.6** ການເກັບຮັກສາວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ

ການເກັບຮັກສາວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ໃຫ້ປະຕິບັດຕາມມາດຕະຖານ ດັ່ງນີ້:

1) ໃຫ້ເກັບມ້ຽນໃຫ້ເປັນລະບຽບດີ ຢູ່ໃນສະຖານທີ່ສາງພາຍໃນໂຮງງານທີ່ໄດ້ມາດຕະຖານ ເປັນຕົ້ນ ພື້ນເຮັດດ້ວຍເບຕົງ ທີ່ແໜ້ນໜາແຂງແຮງ ແລະ ຮັບປະກັນບໍ່ໃຫ້ມີນໍ້າຂັງ;

2) ໃຫ້ມີຜ້າບັດໜາປົກຫຸ້ມວັດຖຸດິບສິ່ງເສດເຫຼືອ, ສາມາດກັນຝົນ, ລົມ ແລະ ມີຄວາມທົນທານ ບໍ່ຈີກຂາດໄດ້ງ່າຍ;

3) ໃຫ້ມີຮ່ອງນໍ້າອ້ອມຮອບຂອບເຂດສາງ ເພື່ອລະບາຍນໍ້າເປື້ອນທີ່ໄຫຼອອກຈາກສາງລົງສູ່ອ່າງເກັບໄວ້ສະເພາະເພື່ອເຂົ້າຜ່ານລະບົບບໍາບັດ. ຫ້າມບໍ່ໃຫ້ເກັບມ້ຽນວັດຖຸດິບສິ່ງເສດເຫຼືອໄວ້ຢູ່ນອກຂອບເຂດໂຮງງານ.

**4.7 ມາດຕະຖານການບໍາບັດ ແລະ ການກໍາຈັດສິ່ງເສດເຫຼືອໂຮງງານ**

ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຕ້ອງມີລະບົບບໍາບັດ ແລະ ການກໍາຈັດສິ່ງເສດເຫຼືອ ທີ່ໄດ້ມາດ ຕະຖານ ໂດຍການອອກແບບແຜນຜັງລະບົບດັ່ງກ່າວ ແລ້ວນໍາສະເໜີຕໍ່ກົມອຸດສາຫະກໍາ ແລະ ຫັດຖະກໍາ ເພື່ອກວດກາຄວາມຖືກຕ້ອງ ຫຼັງຈາກນັ້ນຈຶ່ງສາມາດດໍາເນີນການກໍ່ສ້າງ, ຕິດຕັ້ງເຄື່ອງຈັກບໍາບັດ ແລະ ກໍາຈັດສິ່ງເສດເຫຼືອນັ້ນໄດ້.

ໃນຂະບວນການຜະລິດທີ່ກໍ່ໃຫ້ເກີດມີມົນລະພິດ ຕ້ອງຕິດຕັ້ງເຄື່ອງຈັກບໍາບັດກິ່ນ, ຄວັນ ແລະ ມີຮ່ອງລະບາຍນໍ້າເພື່ອນໍາໄປບໍາບັດ.

ສິ່ງເສດເຫຼືອຂອງໂຮງງານ ຕ້ອງຜ່ານການບໍາບັດໃຫ້ໄດ້ເກນມາດຕະຖານ ຈຶ່ງສາມາດປ່ອຍອອກຈາກໂຮງງານໄດ້. ສໍາລັບຄ່າມາດຕະຖານຂອງສິ່ງເສດເຫຼືອທີ່ຈະປ່ອຍອອກຈາກໂຮງງານ ໃຫ້ປະຕິບັດຕາມລະບຽບການຂອງກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ລະບຽບການທີ່ກ່ຽວຂ້ອງກໍານົດໄວ້.

4.8 **ມາດຕະຖານດ້ານຄວາມປອດໄພໃນໂຮງງານ**

ໃນໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຕ້ອງມີມາດຕະຖານຄວາມປອດໄພ ຄືດັ່ງນີ້:

1) ໃຫ້ຕິດຕາມກວດກາສະພາບອາຄານໂຮງງານ ຢ່າງເປັນປົກກະຕິ. ໃນກໍລະນີອາຄານໂຮງງານຫາກເປ່ເພ ຫຼື ຊຸດໂຊມ ຕ້ອງສ້ອມແປງໃຫ້ຢູ່ໃນສະພາບດີ ແລະ ແໜ້ນໜາແຂງແຮງ ເພື່ອຮັບປະກັນໃຫ້ໂຄງສ້າງອາຄານໂຮງງານ ມີຄວາມປອດໄພ;

2) ພາຍໃນໂຮງງານ ໃຫ້ຕິດຕັ້ງລະບົບໄຟຟ້າທີ່ຮັບປະກັນຄວາມປອດໄພ ເຊັ່ນ: ລະບົບໄຟຟ້າເຄື່ອງຈັກ, ໄຟຟ້າແສງສະຫວ່າງ ແລະ ມີອຸປະກອນຕັດໄຟຟ້າແບບອັດຕະໂນມັດ;

3) ໃຫ້ຕິດປ້າຍເຕືອນ, ປ້າຍຫ້າມ ແລະ ແຕ້ມເສັ້ນສີໝາຍຂອບເຂດ ຫຼື ເຄື່ອງໝາຍເຕືອນ ຢູ່ເຂດອັນຕະລາຍ ຫຼື ບ່ອນທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ;

4) ໃຫ້ຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ພາຍໃນໂຮງງານໃຫ້ເໝາະສົມ ແລະ ພຽງພໍ ເຊັ່ນ: ອຸປະກອນມອດໄຟ ຫຼື ລະບົບນໍ້າມອດໄຟ, ລະບົບສັນຍານເຕືອນໄພ ແລະ ອື່ນໆ;

5) ໃຫ້ມີໜ່ວຍງານບໍລິຫານຄວາມປອດໄພປະຈຳຢູ່ໂຮງງານ ເພື່ອປະຕິບັດໜ້າທີ່ໃນການຕິດຕາມ, ກວດກາ ແລະ ລາຍງານສະພາບການເກີດອຸປະຕິເຫດພາຍໃນໂຮງງານ ໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບເປັນປະຈຳ;

6) ພະນັກງານ ແລະ ກຳມະກອນທັງໝົດຂອງໂຮງງານ ຕ້ອງໄດ້ຜ່ານການຝຶກອົບຮົມວຽກງານຄວາມປອດໄພໂຮງງານ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

**4.9 ມາດຕະຖານດ້ານສຸຂານາໄມຂອງໂຮງງານ**

ໃນໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຕ້ອງມີມາດຕະຖານດ້ານສຸຂານາໄມຂອງໂຮງງານ ຄືດັ່ງນີ້:

1) ກຳມະກອນທີ່ເຮັດວຽກຢູ່ໃນໂຮງງານຕ້ອງໃສ່ເຄື່ອງມືອຸປະກອນປ້ອງກັນແຮງງານ ທີ່ມີມາດຕະຖານຕາມຄວາມເໝາະສົມ ໂດຍຂຶ້ນກັບຄວາມຈຳເປັນຂອງແຕ່ລະຂອດງານທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ ເຊັ່ນ: ຊຸດເຄື່ອງນຸ່ງ, ໝວກກັນກະທົບ, ອຸປະກອນປິດປາກ ເພື່ອປ້ອງກັນຝຸ່ນ, ກິ່ນ, ຄວັນ ແລະ ອຸປະກອນປິດຫູ ເພື່ອປ້ອງກັນສຽງດັງ, ຊົບມື, ເກີບປ້ອງກັນອຸບປະຕິເຫດແຮງງານ, ຊຸດກັນຄວາມຮ້ອນ, ແວ່ນຕາກັນແສງ ແລະ ອື່ນໆ;

2) ໃຫ້ມີຕູ້ຢາ ແລະ ອຸປະກອນປະຖົມພະຍາບານເບື້ອງຕົ້ນຢູ່ໃນໂຮງງານ ເປັນຕົ້ນ ຢາແກ້ປວດ, ຜ້າພັນແຜ, ສຳລີ, ຢາແດງ, ຢາລ້າງບາດ, ບາຫຼອດວັດແທກອຸນຫະພູມ ແລະ ສາຍຢາງຮັດຫ້າມເລືອດ. ສຳລັບໂຮງງານຂະໜາດກາງ ແລະ ຂະໜາດໃຫຍ່ ທີ່ມີຄົນງານແຕ່ 51 ຄົນຂຶ້ນໄປ ໃຫ້ມີຫ້ອງປະຖົມພະຍາບານເບື້ອງຕົ້ນຢູ່ໃນໂຮງງານ;

3) ໃຫ້ມີລະບົບນ້ຳໃຊ້ຢ່າງພຽງພໍ ເຊັ່ນ: ລະບົບນ້ຳປະປາ, ນ້ຳບາດານ ແລະ ອື່ນໆ;

4) ໃຫ້ມີນ້ຳດື່ມສະອາດ, ມີຈອກນ້ຳດື່ມສະອາດ ໃຫ້ພຽງພໍ ແລະ ເໝາະສົມກັບຈຳນວນຄົນງານ;

5) ໃຫ້ມີຫ້ອງນ້ຳ, ຫ້ອງປັດສະວະສະອາດ ມີເຈັ້ຍອະນາໄມພຽງພໍກັບຈຳນວນພະນັກງານ ແລະ ກຳມະກອນຕາມຄວາມເໝາະສົມ;

6) ໃຫ້ມີບ່ອນລ້າງມື, ນ້ຳຢາຂ້າເຊື້ອ ຫຼື ສະບູ ທີ່ຖືກຫຼັກສຸຂານາໄມ ໃຫ້ພຽງພໍ ແລະ ເໝາະສົມກັບຈຳນວນພະນັກງານ ແລະ ກຳມະກອນ;

7) ໃຫ້ມີຫ້ອງປ່ຽນເຄື່ອງນຸ່ງ, ສະຖານທີ່ພັກຜ່ອນ, ສະຖານທີ່ຈອດລົດ, ສະຖານທີ່ຮັບປະທານອາຫານ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ຕາມຄວາມເໝາະສົມ;

8) ພະນັກງານ ແລະ ກຳມະກອນທັງໝົດຂອງໂຮງງານ ຕ້ອງໄດ້ຜ່ານການກວດສຸຂະພາບເປັນປົກກະຕິ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ຕາມກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການສະເພາະທີ່ກ່ຽວຂ້ອງ. ຖ້າກວດພົບຜູ້ທີ່ມີພະຍາດຕິດແປດ ຫຼື ພະຍາດອາຊີບ ຕ້ອງໃຫ້ຢຸດເຊົາການເຮັດວຽກຢູ່ໂຮງງານ ແລະ ໃຫ້ປະຕິບັດນະໂຍບາຍຕໍ່ຜູ້ກ່ຽວ ຕາມທີ່ກຳນົດໃນກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການທີ່ກ່ຽວຂ້ອງ.

**4.10 ການບໍລິຫານໂຮງງານ**

ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ໃຫ້ມີແຜນການບໍລິຫານໂຮງງານ, ການຄຸ້ມຄອງການຜະ ລິດ ແລະ ປະຕິບັດໃຫ້ໄດ້ມາດຕະຖານໃດໜຶ່ງ ເປັນຕົ້ນ ລະບົບ 5 ສ (5S) ໂດຍຜ່ານການຢັ້ງຢືນຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ຫຼື ປະຕິບັດໃຫ້ໄດ້ມາດຕະຖານສາກົນ (ISO) ໃດໜຶ່ງ ໂດຍຜ່ານການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ.

**5. ວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ສະໜອງແກ່ໂຮງງານ**

ວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ທີ່ຈະນຳມາປຸງແຕ່ງຢູ່ໃນໂຮງງານ ສາມາດນຳໃຊ້ວັດຖຸດິບຢູ່ພາຍໃນ ຫຼື ນຳເຂົ້າຈາກຕ່າງປະເທດ ໂດຍມີເງື່ອນໄຂ ຄືດັ່ງນີ້:

**5.1** ການນຳໃຊ້ວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ຢູ່ພາຍໃນແມ່ນສາມາດນຳໃຊ້ໄດ້ທັງໝົດທຸກປະເພດ ຍົກເວັ້ນແຕ່ສິ່ງເສດເຫຼືອຢາງປລາສະຕິກປະເພດຕິດເຊື້ອພະຍາດ.

**5.2** ວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ທີ່ນຳເຂົ້າມາຈາກຕ່າງປະເທດ ຕ້ອງເປັນຮູບແບບແຜ່ນຢາງ, ຖົງຢາງ, ຢາງແຂງ ເປັນແທ່ງ, ເປັນແຜ່ນ ຫຼື ເປັນກ້ອນ ແລະ ຕ້ອງມີຄວາມສະອາດ, ສາມາດນຳມາຜະລິດເປັນຜະລິດຕະພັນໄດ້ຢ່າງໜ້ອຍ 80% ຂຶ້ນໄປ ແລະ ສາມາດນຳເຂົ້າໄດ້ສະເພາະປະເພດ ດັ່ງນີ້:

1) Acry lonitrile Butadiene Stryrene (ABS);
2) Low Density Polyethylene (LDPE);
3) High Density Polyethy len (HDPE);
4) Polymide6 (nylon) (PA6);
5) Polyamide66 (nylon) (PA66);
6) Polyethylene (PE);
7) Polyphey lene ether (PPE);
8) Polycarbonate (PC);
9) Polybutylene terephthalate (PBT);
10) Polyvinyl chloride (PVC);
11) Polyethylene terephtalate (PET);
12) Methyl Methacrylate (MMA);
13) Polymethyl methacrylate (PMMA);
14) Polypropylene (PP);
15) Cross linked polyethylene (XLPE).

**5.3** ຫ້າມນຳເຂົ້າວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ 5.2 ແລະ ສິ່ງເສດເຫຼືອຢາງປລາສະຕິກທີ່ມີລັກສະນະ ດັ່ງນີ້:

1) ປະເພດຕິດເຊື້ອພະຍາດ;

2) ບໍ່ສະອາດ, ມີກິ່ນເໝັນ ຫຼື ຂີ້ວຮ້າຍແຮງ;

3) ວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ທີ່ມີອົງປະກອບ ຫຼື ປົນເປື້ອນທາດເຄມີເປັນອັນຕະລາຍ ຈົນສາມາດປ່ຽນຄຸນລັກສະນະ ເຊັ່ນ: ກໍ່ໃຫ້ເກີດລະເບີດ, ທາດແຫຼວໄວໄຟ, ທາດແຂງໄວໄຟ, ທາດທີ່ສາມາດຕິດໄຟໄດ້ເອງ, ທາດທີ່ສຳຜັດກັບນ້ຳຈະໃຫ້ທາດໄວໄຟ, ອັອກຊີໄດ, ເປີອັອກໄຊອິນຊີ, ເປັນພິດ, ກັດກ່ອນ ແລະ ກາສ໌ພິດ ເມື່ອສຳຜັດກັບອາກາດ ແລະ ນ້ຳ;

4) ບໍ່ສາມາດນຳມາຜະລິດຄືນໃໝ່ໄດ້.

### 6. ການຂົນສົ່ງວັດຖຸດິບ ສິ່ງເສດເຫຼືອຢາງປລາສະຕິກ

ວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ຈາກພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ທີ່ຈະຂົນສົ່ງເຂົ້າສູ່ໂຮງງານ ຕ້ອງມັດໃຫ້ແໜ້ນເປັນກ້ອນ, ຫຸ້ມຫໍ່ ຫຼື ໃສ່ພາຊະນະບັນຈຸທີ່ປິດແຈບໄດ້ມາດຕະຖານ ແລະ ພາຫະນະຂົນສົ່ງທີ່ເປັນຕູ້ຄອນເທນເນີ ຫຼື ປົກປິດດ້ວຍຜ້າບັດທີ່ແໜ້ນໜາ ຮັບປະກັນບໍ່ໃຫ້ມີກິ່ນ ຫຼື ຕົກເຮ່ຍ ໃນໄລຍະເວລາຂົນສົ່ງ.

### 7. ການສ້າງແຜນການເຄື່ອນໄຫວປະຈຳປີ

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ໃຫ້ສ້າງແຜນການເຄື່ອນໄຫວ, ສະຫຼຸບການເຄື່ອນໄຫວປະຈຳປີ ຕາມແບບພິມ ອ ເຊັ່ນ: (ອ1) ແຜນການຜະລິດ, (ອ2) ແຜນການຈຳໜ່າຍ, (ອ3) ແຜນຄວາມຕ້ອງການປະຈຳປີ ແລະ (ອ6) ການສະຫຼຸບການນຳເຂົ້າວັດຖຸດິບ, ອາໄຫຼ່, ເຄື່ອງຈັກ, ອຸປະກອນ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດ ໂດຍກຳນົດຕາມຄວາມອາດສາມາດຜະລິດຕົວຈິງຂອງໂຮງງານ ແລ້ວຍື່ນຕໍ່ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຢັ້ງຢືນ.

ແຜນການເຄື່ອນໄຫວປະຈຳປີ ຂອງໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຖ້າມີຄວາມຈຳເປັນຢາກດັດແກ້ແມ່ນສາມາດດັດແກ້ໄດ້ໜຶ່ງຄັ້ງຕໍ່ປີ ໃນກໍລະນີການນຳເຂົ້າຕົວຈິງບໍ່ສາມາດປະຕິບັດຕາມແຜນຄວາມຕ້ອງການປະຈຳປີ (ອ3) ໄດ້, ສ່ວນທີ່ເຫຼືອຖືວ່າໝົດໄປ.

## 8. ການນຳເຂົ້າສິ່ງເສດເຫຼືອຢາງປລາສະຕິກ

### 8.1 ເງື່ອນໄຂຂອງການນຳເຂົ້າສິ່ງເສດເຫຼືອຢາງປລາສະຕິກ

ການນຳເຂົ້າສິ່ງເຫຼືອຢາງປລາສະຕິກເພື່ອມາປຸງແຕ່ງໃນໂຮງງານ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

1) ຕ້ອງເປັນໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ທີ່ໄດ້ເງື່ອນໄຂຕາມທີ່ກຳນົດໃນຄຳແນະນຳສະບັບນີ້;

2) ຕ້ອງມີແຜນຄວາມຕ້ອງການນຳເຂົ້າວັດຖຸດິບປະຈຳປີ ຕາມແບບພິມ ອ3 ທີ່ໄດ້ຜ່ານການຢັ້ງຢືນຈາກກົມອຸດສາຫະກຳ ແລະ ຫັດຖະກຳ;

3) ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຂອງສິ່ງເສດເຫຼືອຢາງປລາສະຕິກ ຈາກເຈົ້າໜ້າທີ່ພາກລັດ ຫຼື ອົງກອນໃດໜຶ່ງທີ່ກ່ຽວຂ້ອງຂອງປະເທດຕົ້ນທາງ ທີ່ໄດ້ລະບຸເຖິງປະເພດ, ປະລິມານ, ຄວາມສະອາດ ແລະ ອື່ນໆ;

4) ຕ້ອງປະຕິບັດພັນທະດ້ານພາສີ, ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5) ວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກທີ່ຈະນຳເຂົ້າ ຕ້ອງມັດໃຫ້ແໜ້ນເປັນກ້ອນ ຕາມຂະໜາດທີ່ເໝາະສົມ, ຫຸ້ມຫໍ່ ຫຼື ບັນຈຸໃສ່ພາຊະນະທີ່ປິດແຈບ.

### 8.2 ຂັ້ນຕອນການນຳເຂົ້າສິ່ງເສດເຫຼືອຢາງປລາສະຕິກ

ການນຳເຂົ້າສິ່ງເສດເຫຼືອຢາງປລາສະຕິກ ເພື່ອມາປຸງແຕ່ງຢູ່ໂຮງງານ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1) ໃຫ້ຍື່ນໜັງສືສະເໜີຂໍນຳເຂົ້າເປັນແຕ່ລະກໍລະນີ ເຖິງກົມອຸດສາຫະກຳ ແລະ ຫັດຖະກຳ ໂດຍຄັດຕິດແຜນການເຄື່ອນໄຫວປະຈຳປີ ແລະ ເອກະສານທີ່ກ່ຽວຂ້ອງ ເຊັ່ນ: ❶ໃບສັ່ງຊື້ສິນຄ້າ (Purchase Order), ❷ໃບສະເໜີລາຄາ (Commercial Invoice), ❸ໃບຢັ້ງຢືນຄວາມສະອາດຂອງສິ່ງເສດເຫຼືອປລາສະຕິກ ຈາກເຈົ້າໜ້າທີ່ພາກລັດ ຫຼື ອົງກອນໃດໜຶ່ງທີ່ກ່ຽວຂ້ອງຂອງປະເທດຕົ້ນທາງ, ❹ຮູບຖ່າຍສິ່ງເສດເຫຼືອຢາງປລາສະຕິກ, ❺ໃບມອບສິດຜູ້ມາພົວພັນເອກະສານ, ❻ສຳເນົາໃບທະບຽນວິສາຫະກິດ, ❼ສຳເນົາໃບຢັ້ງຢືນດ້ານສິ່ງແວດລ້ອມໂຮງງານ, ❽ສຳເນົາໃບຢັ້ງຢືນດຳເນີນກິດຈະການໂຮງງານ, ❾ສຳເນົາໃບມອບພັນທະພາສີ, ອາກອນ ແລະ ພັນທະອື່ນໆ;

2) ການນຳເຂົ້າວັດຖຸດິບສິ່ງເສດເຫຼືອຢາງປລາສະຕິກ ໃຫ້ນຳເຂົ້າຜ່ານດ່ານສາກົນ ທີ່ໃກ້ກັບໂຮງງານ;

3) ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ຄົ້ນຄວ້າພິຈາລະນາ ຕາມແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ແລະ ໃຫ້ອອກໃບຢັ້ງຢືນການນຳເຂົ້າ ພາຍໃນ 7 ວັນ ລັດຖະການ ນັບແຕ່ມື້ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ. ໃນກໍລະນີເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ໃຫ້ແຈ້ງຕໍ່ຜູ້ສະເໜີຊາບ ພາຍໃນ 5 ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ; ພາຍຫຼັງໄດ້ອອກໃບຢັ້ງການນຳເຂົ້າແລ້ວ ຕ້ອງສົ່ງສຳເນົາເອກະສານໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ບ່ອນທີ່ໂຮງງານຕັ້ງຢູ່ ພາຍໃນ 5 ວັນລັດຖະການ ເພື່ອຕິດຕາມການນຳເຂົ້າຕົວຈິງ.

4) ໃຫ້ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຍື່ນໃບຢັ້ງຢືນການນຳເຂົ້າ ຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານສາກົນ ເພື່ອຕິດຕາມ ແລະ ກວດກາ ການນຳເຂົ້າຕົວຈິງ;

5) ສິ່ງເສດເຫຼືອຢາງປລາສະຕິກ ທີ່ນຳເຂົ້າຈາກຕ່າງປະເທດຮອດໂຮງງານ ກ່ອນເປີດຕູ້ບັນຈຸສິ່ງເສດເຫຼືອດັ່ງກ່າວ ໃຫ້ເຈົ້າຂອງໂຮງງານແຈ້ງຕໍ່ກົມອຸດສາຫະກຳ ແລະ ຫັດຖະກຳ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງກວດກາ. ສຳລັບໂຮງງານທີ່ຢູ່ໃນເຂດອຸດສາຫະກຳ, ນິຄົມອຸດສາຫະກຳ ຫຼື ເຂດເສດຖະກິດພິເສດ ໃຫ້ເຈົ້າຂອງໂຮງງານແຈ້ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອສົມທົບກັບຄະນະຮັບຜິດຊອບເຂດລົງກວດກາ. ໃນນັ້ນ ກົມອຸດສາຫະກຳ ແລະ ຫັດຖະກຳ ຈະລົງສົມທົບກວດບາງກໍລະນີທີ່ເຫັນວ່າຈຳເປັນ ແລະ ກໍລະນີສົງໄສ;

6) ໃນກໍລະນີຫາກກວດເຫັນການນຳເຂົ້າສິ່ງເສດເຫຼືອຢາງປລາສະຕິກ ບໍ່ໄດ້ມາດຕະຖານ ຕາມທີ່ກຳນົດໄວ້ຢູ່ຂໍ້ 5.2 ແລະ 5.3 ໃນຂໍ້ 5 ຂອງຄຳແນະນຳສະບັບນີ້ ໃຫ້ສົ່ງກັບຄືນປະເທດຕົ້ນທາງທັນທີ. ສຳລັບຄ່າສິ້ນເປືອງໃນການສົ່ງກັບຄືນແມ່ນໂຮງງານ ຫຼື ບໍລິສັດນຳເຂົ້າ ເປັນຜູ້ຮັບຜິດຊອບທັງໝົດ.

**8.3 ໃບຢັ້ງຢືນການນຳເຂົ້າສິ່ງເສດເຫຼືອຢາງປລາສະຕິກ**

1) ການພິຈາລະນາອອກໃບຢັ້ງຢືນການນຳເຂົ້າ ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ພິຈາລະນາຕາມແຜນການນຳເຂົ້າປະຈຳປີ ທີ່ໄດ້ຜ່ານການຢັ້ງຢືນແລ້ວເປັນແຕ່ລະຄັ້ງ ໂດຍອີງໃສ່ຄວາມສາມາດຜະລິດຕົວຈິງຂອງໂຮງງານ;

2) ໃບຢັ້ງຢືນການນຳເຂົ້າມີອາຍຸການນຳໃຊ້ໄດ້ພາຍໃນ 180 ວັນ ນັບແຕ່ມື້ອອກໃບຢັ້ງຢືນ. ໃບຢັ້ງຢືນການນຳເຂົ້າສາມາດຕໍ່ໄດ້ໜຶ່ງຄັ້ງແຕ່ບໍ່ເກີນ 90 ວັນ.

**9. ຄ່າທຳນຽມ ແລະ ຄ່າບໍລິການ ໃນການນຳເຂົ້າສິ່ງເສດເຫຼືອຢາງປລາສະຕິກຈາກຕ່າງປະເທດ**

ການນຳເຂົ້າສິ່ງເສດເຫຼືອຢາງປລາສະຕິກ ຈາກຕ່າງປະເທດ ຕ້ອງໄດ້ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

**10. ການປັບປຸງ, ດັດສົມ ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ**

ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ທີ່ສ້າງຕັ້ງກ່ອນຄຳແນະນຳສະບັບນີ້ ໃຫ້ປັບປຸງ ແລະ ດັດສົມ ຄືດັ່ງນີ້:

10.1 ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ທີ່ໄດ້ຮັບອະນຸຍາດ ແລະ ດຳເນີນກິດຈະການຜ່ານມາແລ້ວ ຕ້ອງປັບປຸງໃຫ້ຄົບຖ້ວນຕາມເງື່ອນໄຂ ທີ່ກຳນົດໄວ້ໃນ ຂໍ້ 2 ແລະ ປະຕິບັດໃຫ້ໄດ້ຕາມມາດຕະຖານທາງດ້ານເຕັກນິກທີ່ກຳນົດໄວ້ໃນ ຂໍ້ 3 ແລະ ຂໍ້ 4 ຂອງຄຳແນະນຳສະບັບນີ້;

10.2 ກໍລະນີໂຮງງານໃດບໍ່ຄົບເງື່ອນໄຂ ແລະ ມາດຕະຖານດັ່ງກ່າວ ໃຫ້ຜູ້ດຳເນີນກິດຈະການໂຮງງານສ້າງແຜນການປັບປຸງໂຮງງານ ແລ້ວນຳສະເໜີຕໍ່ກົມອຸດສາຫະກຳ ແລະ ຫັດຖະກຳ ເພື່ອກວດກາຄວາມສອດຄ່ອງກັບເງື່ອນໄຂ ແລະ ມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນຄຳແນະນຳສະບັບນີ້. ພາຍຫຼັງແຜນການປັບປຸງໂຮງງານໄດ້ຜ່ານການຢັ້ງຢືນແລ້ວ ຈຶ່ງປັບປຸງໂຮງງານໄດ້. ໃນໄລຍະການປັບປຸງໂຮງງານ ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ລົງຕິດຕາມ ເປັນແຕ່ລະໄລຍະຈົນກວ່າການປັບປຸງໂຮງງານສຳເລັດ. ໃນໄລ ຍະການປັບປຸງ ໃຫ້ໂຮງງານຢຸດເຊົາການຜະລິດຊົ່ວຄາວໃນສ່ວນທີ່ປັບປຸງ;

10.3 ເມື່ອປັບປຸງໂຮງງານສຳເລັດແລ້ວ ຈຶ່ງສາມາດສະເໜີຂໍດຳເນີນກິດຈະການໂຮງງານ ຕໍ່ກົມອຸດສາຫະກຳ ແລະ ຫັດຖະກຳ ເພື່ອພິຈາລະນາ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ເລກທີ 0264/ອຄ, ລົງວັນທີ 15 ມີນາ 2019.

10.4 ພາຍຫຼັງປະຕິບັດໃຫ້ຄົບຖ້ວນຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້ ແລະ ໄດ້ຮັບອະນຸຍາດຈາກກົມອຸດສາຫະກຳ ແລະ ຫັດຖະກຳ ແລ້ວຈຶ່ງສາມາດດຳເນີນການຜະລິດໄດ້.

**11. ການສ້າງຕັ້ງໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກໃໝ່**

ການສ້າງຕັ້ງໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກໃໝ່ ໃຫ້ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້ ແລະ ປະຕິບັດຂັ້ນຕອນການສະເໜີສ້າງຕັ້ງໂຮງງານ ຕາມທີ່ກຳນົດໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ເລກທີ 0264/ອຄ, ລົງວັນທີ 15 ມີນາ 2019 ແຕ່ຕ້ອງລໍຖ້າມີນິຕິກຳສະບັບໃໝ່ປ່ຽນແທນຄຳສັ່ງ ສະບັບເລກທີ 0930/ອຄ.ກອຫ, ລົງວັນທີ 31 ກໍລະກົດ 2019 ໂດຍເຫັນດີອະນຸຍາດໃຫ້ດຳເນີນທຸລະກິດໃໝ່ ກ່ຽວກັບໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຈຶ່ງສາມາດຮັບເອກະສານສະເໜີສ້າງຕັ້ງໂຮງງານໃໝ່ໄດ້.

**12. ມາດຕະການຕໍ່ຜູ້ລະເມີດ**

ຜູ້ລະເມີດຕໍ່ຄຳແນະນຳສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

12.1 ໂຮງງານປຸງແຕ່ງສິ່ງເສດເຫຼືອຢາງປລາສະຕິກ ຫາກບໍ່ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້ ຈະຖືກປະຕິບັດມາດຕະການຕາມມາດຕາ 53, 54 ແລະ 55 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ເລກທີ 0264/ອຄ, ລົງວັນທີ 15 ມີນາ 2019, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

12.2 ໃນກໍລະນີທານນໍາເຂົ້າສິ່ງເສດເຫຼືອຢາງປລາສະຕິກ ບໍ່ໄດ້ຕາມມາດຕະຖານທີ່ກໍານົດໄວ້ຢູ່ຂໍ້ 5.2 ແລະ 5.3 ໃນຂໍ້ 5 ຂອງຄໍາແນະນໍາສະບັບນີ້ ຈະຖືກປັບໃໝຕາມມາດຕາ 55 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ເລກທີ 0264/ອຄ, ລົງວັນທີ 15 ມີນາ 2019, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

12.3 ເມັດຢາງທີ່ຜະລິດຄືນໃໝ່ຈາກສິ່ງເສດເຫຼືອຢາງປລາສະຕິກ ຖ້າບໍ່ໄດ້ຄຸນນະພາບສິ່ງຫຸ້ມຫໍ່ອາຫານ (Food Grade) ບໍ່ອະນຸຍາດໃຫ້ນໍາໄປຜະລິດເປັນຜະລິດຕະພັນສໍາເລັດຮູບປະເພດພາຊະນະບັນຈຸອາຫານ ຫຼື ພາຊະນະບັນຈຸເຄື່ອງດື່ມທຸກຊະນິດ. ກໍລະນີລະເມີດ ຈະຖືກປະຕິບັດມາດຕະການຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ເລກທີ 0264/ອຄ, ລົງວັນທີ 15 ມີນາ 2019, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຕາມແຕ່ລະກໍລະນີ.

## 13. ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກໍາ ແລະ ຫັດຖະກໍາ ເຜີຍແຜ່ ແນະນໍາພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ໃນການຄຸ້ມຄອງ, ຕິດຕາມ, ກວດກາຢ່າງເຂັ້ມງວດ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຕາມຄໍາແນະນໍາສະບັບນີ້ໃຫ້ໄດ້ຮັບຜົນດີ.

## 14. ຜົນສັກສິດ

ຄໍາແນະນໍາສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ. ໑

**ລັດຖະມົນຕີ**

ກະຊວງອຸດສາຫະກໍາ ແລະ ການຄ້າ

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ